**ມິຊຊາອາທິດທີ 29 ກຳນົດທຳມະດາ**

**ວັນທີ 16 ຕຸລາ 2022**



**ພຣະວໍລະສານໂດຍນັກບຸນລູກາ 18, 1-8**

ໃນເວລານັ້ນ, ພຣະເຢຊູເຈົ້າຍັງກ່າວຄວາມປຽບທຽບໃຫ້ພວກສາວົກຟັງ ເພື່ອໃຫ້ເຂົາເຂົ້າໃຈເຖິງຄວາມຈຳເປັນທີ່ຈະຕ້ອງສວດພາວະນາຢ່າງບໍ່ຢຸດບໍ່ຖອຍວ່າ: ຢູ່ໃນເມືອງໜຶ່ງ, ມີຕຸລາການທີ່ບໍ່ຢ້ານພຣະເຈົ້າແລະບໍ່ຈູງມມະນຸດ. ແລະຢູ່ໃນເມືອງດຽວກັນນັ້ນກໍມີນາງໝ້າຍຜູ້ໜຶ່ງດ້ວຍ. ນາງມາວອນຂໍນຳຕຸລາການວ່າ: ຂໍທ່ານຕັດສິນຄວາມກັບຄູ່ຄະດີໃຫ້ຂ້ານ້ອຍດ້ວຍ. ຕຸລາການນັ້ນກໍເສີຍໄປເປັນເວລາດົນນານ. ແຕ່ທ້າຍສຸດ, ເພິ່ນຄິດວ່າ: ແມ່ນເຮົາບໍ່ຢ້ານພຣະເຈົ້າແລະບໍ່ຈູງມມະນຸດ ແຕ່ນາງໝ້າຍນີ້ມາລົບກວນເຮົາຢູ່ບໍ່ເຊົາ, ເຮົາຕ້ອງຕັດສິນຄວາມໃຫ້ເຂົາເສຍເພື່ອບໍ່ໃຫ້ເຂົາມາກຸກວນເຮົາອີກ.

ພຣະເຢຊູເຈົ້າຊົງກ່າວຊ້ຳວ່າ: ຈົ່ງຟັງຄວາມເວົ້າຂອງຕຸລາການຜູ້ອະທັມນັ້ນໃຫ້ດີ! ສ່ວນພຣະເຈົ້າ, ພຣະອົງຈະບໍ່ໃຫ້ຄວາມເປັນທັມແກ່ບັນດາຜູ້ເລືອກສັນທີ່ຮ້ອງຫາພຣະອົງທັງເວັນທັງຄືນບໍ? ພຣະອົງຍັງຈະໃຫ້ພວກເຂົາຄອງຖ້າຢູ່ບໍ? ເຮົາບອກພວກເຈົ້າວ່າ: ພຣະອົງຈະໃຫ້ຄວາມເປັນທັມແກ່ເຂົາໂດຍໄວ.

ແຕ່ເມື່ອບຸດມະນຸດຈະສະເດັດກັບມາ, ພຣະອົງຍັງຈະເຫັນຄວາມເຊື່ອຢູ່ໃນໂລກອີກບໍ?

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດກ່ອນ, ວາຈາພຣະເຈົ້າໄດ້ກ່າວເຖິງຄວາມເຊື່ອຂອງຄົນຕ່າງສາດສະໜາທີ່ເປັນພະຍາດຂີ້ທູດ. ອາໄສຄວາມເຊື່ອ, ເຂົາຈຶ່ງໄດ້ຮັບການຮັກສາຈາກພຣະເຢຊູເຈົ້າ. ຈາກນັ້ນ, ເຂົາໄດ້ສະແດງຄວາມເຊື່ອຂອງເຂົາອອກດ້ວຍການຂອບພຣະຄຸນພຣະເປັນເຈົ້າ. ສ່ວນຄົນຂີ້ທູດອີກເກົ້າຄົນກໍໄດ້ຮັກສາໃຫ້ຫາຍດີເຊັ່ນດຽວກັນ, ແຕ່ພວກເຂົາບໍ່ສະແດງຄວາມເຊື່ອຂອງພວກເຂົາອອກມາ.

ສ່ວນວັນອາທິດນີ້, ວາຈາພຣະເຈົ້າກໍສືບຕໍ່ກ່າວເຖິງຄວາມເຊື່ອ. ແຕ່ເທື່ອນີ້ແມ່ນຄວາມເຊື່ອທີ່ສະແດງອອກຜ່ານທາງຄໍາເວົ້າອັນແມ່ນຄໍາພາວະນານັ້ນເອງ.

ເພາະການພາວະນາແມ່ນການປາກເວົ້າກັບພຣະເຈົ້າ ຜູ້ຊຶ່ງພວກເຮົາເຊື່ອໝັ້ນ, ໄວ້ໃຈແລະຮັກ. ດ້ວຍເຫດນີ້, ຄໍາພາວະນາຈຶ່ງເປັນການສົນທະນາກັບພຣະເຈົ້າ, ດັ່ງຜູ້ລູກປາກເວົ້າກັບຜູ້ເປັນພໍ່. ເພາະພໍ່ຜູ້ນີ້ເປັນຜູ້ທີ່ຮັບຟັງພວກເຮົາສະເໝີແລະພ້ອມທີ່ຈະໃຫ້ຄວາມຊ່ວຍເຫລືອຕະຫລອດເວລາ. ແຕ່ບາງຄັ້ງ, ພວກເຮົາກໍອາດມີຄວາມສົງໄສແລະຂາດຄວາມເຊື່ອໃນເວລາພາວະນາ. ເພາະພວກເຮົາບໍ່ໄດ້ຮັບພຣະຄຸນຕາມທີ່ພວກເຮົາວອນຂໍ. ພວກເຮົາຈຶ່ງມີຄວາມຮູ້ສຶກວ່າ ພຣະເຢຊູເຈົ້າບໍ່ສະດັບຟັງພວກເຮົາ, ພຣະອົງບໍ່ຮັກແພງພວກເຮົາອີກ, ພຣະອົງປະຖິ້ມພວກເຮົາແລ້ວ. ແຕ່ພວກເຮົາກໍລືມໄປເຊັ່ນດຽວກັນວ່າ ຄໍາວອນຂໍຂອງພວກເຮົານັ້ນເປັນສິ່ງທີ່ຊອບພຣະໄທພຣະເຈົ້າຢູ່ບໍ? ເປັນສິ່ງທີ່ມີປະໂຫຍດຕໍ່ຊີວິດຄວາມເຊື່ອຂອງພວກເຮົາບໍ? ແລະສິ່ງສໍາຄັນກໍຄື ພວກເຮົາໄດ້ວອນຂໍພຣະເຈົ້າດ້ວຍຄວາມເຊື່ອຢ່າງແທ້ຈິງບໍ? ແລະພວກເຮົາໄດ້ວອນຂໍພຣະອົງຢູ່ສະເໝີບໍ? ດ້ວຍເຫດນີ້, ວັນນີ້, ພຣະເຢຊູເຈົ້າຈຶ່ງສອນພວກເຮົາໃຫ້ມີຄວາມພຽນໃນຄໍາພາວະນາ. ແລະພາວະນາດ້ວຍຄວາມເຊື່ອ. ດັ່ງນາງໝ້າຍທີ່ວອນຂໍຄວາມຊ່ວຍເຫລືອຈາກຕຸລາການ. ເຖິງວ່າຕຸລາການນີ້ຈະບໍ່ມີຄວາມຮັກແພງສົງສານມະນຸດ ແລະຢ້ານຈຽມພຣະເຈົ້າ, ແຕ່ເຂົາກໍຕ້ອງຕອບຮັບຄໍາວອນຂໍຂອງນາງໝ້າຍ, ຍ້ອນຄວາມຂູ່ຊີຂອງລາວ. ພຣະເຈົ້າຂອງພວກເຮົາກໍດັ່ງດຽວກັນ, ຖ້າພວກເຮົາວອນຂໍພຣະອົງຢູ່ບໍ່ຂາດ, ພຣະອົງກໍຈະຕອບຮັບຄໍາວອນຂໍຂອງພວກເຮົາ. ເພາະຜູ້ໃດຂໍ, ຜູ້ນັ້ນກໍຈະໄດ້ຮັບ. ຜູ້ໃດເຄາະປະຕູ, ກໍຈະມີຜູ້ໄຂຮັບເອົາ. ດ້ວຍເຫດນີ້, ໃຫ້ພວກເຮົາໝັ່ນພຽນໃນຄໍາພາວະນາ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດຊ່ວຍລູກໃຫ້ມີຄວາມເຊື່ອໝັ້ນແລະຄວາມພຽນໃນຄໍາພາວະນາຢູ່ສະເໝີ. ເພາະຄໍາພາວະນາຈະຊ່ວຍລູກໃຫ້ຫຍັບເຂົ້າຫາພຣະອົງຫລາຍຂຶ້ນ, ເພື່ອປາກເວົ້າສົນທະນາກັບພຣະອົງ. ເພາະມີແຕ່ພຣະອົງເທົ່ານັ້ນທີ່ຈະຊ່ວຍລູກໃຫ້ໄດ້ຮອດຊີວິດ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ